# ການກະກຽມທາງດ້ານກົດໝາຍສຳລັບໄພພິບັດ ແລະ ພາວະສຸກເສີນທີ່ສາມາດຕິດຕໍ່ໄດ້ ຢູ່ປະເທດກຳປູເຈຍ, ລາວ ແລະ ຫວຽດນາມ

## ຄວາມຕ້ານທານຕ່ຳທາງດ້ານພະຍາດ ແລະ ໄພພິບັດໃນລຸ່ມແມ່ນ້ຳຂອງ




ປະເທດກຳປູເຈຍ, ລາວ ແລະ ຫວຽດນາມແມ່ນເປັນບັນດາປະເທດທີ່ມີແມ່ນ້ຳຂອງໄຫລຜ່ານ, ທີ່ມີດິນດອນອັນອຸດົມສົມບູນ ຊຶ່ງຮູ້ກັນໃນນາມວ່າເປັນ "ອູ່ເຂົ້າ" ຂອງຂົງເຂດພາກພື້ນ. ເຖິງເຊັ່ນນັ້ນກໍ່ຕາມ, ໂດຍພື້ນຖານຂົງເຂດດັ່ງກ່າວນີ້ຍັງມັກມີໄພນ້ຳຖ້ວມໄຫລແຮງ ແລະ ໄພແຫ້ງແລ້ງເກີດຂຶ້ນໃນແຕ່ລະປີ, ຊຶ່ງໄດ້ທຳລາຍພືດຜົນ ແລະ ຊີວິດອັນມີຄ່າ.

ຜົນກະທົບຂອງການປ່ຽນແປງສະພາບອາກາດ ເຊື່ອແນ່ວ່າປະກົດການດ້ານໄພພິບັດຈະມີເພີ້ມຂຶ້ນ. ໃນຜ່ານມາ, ເກີດມີໄພນ້ຳຖ້ວມໜັກໃນປີ 2000 ຊຶ່ງໄດ້ສົ່ງຜົນໃຫ້ 8.9 ລ້ານຄົນໄດ້ຮັບຜົນກະທົບໃນທົ່ວທັງໝົດສາມປະເທດ. (ADRC ບົດລາຍງານ ປີ 2003). ນອກຈາກນັ້ນ, ບັນດາແຂວງຕັ້ງແຄມຝັ່ງທະເລຂອງຫວຽດນາມທີ່ຍາວຢຽດອອກໄປ 1590 ກິໂລແມັດ ມີແນວໂນ້ມເກີດຄວາມສ່ຽງກັບພາຍຸລະດູຮ້ອນ ຊຶ່ງມີປະມານ 12 ເທື່ອຄັ້ງເກີດຂຶ້ນໃນແຕ່ລະປີ.

ນອກນັ້ນ, ການມີຄວາມຕ້ານທານຕ່ຳໃນບັນດາຊຸມຊົນທີ່ທຸກຍາກ ແລະ ຫ່າງໄກສອກຫລີກ ກໍ່ໃຫ້ເກີດມີພະຍາດຕິດຕໍ່ຢ່າງແຜ່ຫລາຍ ເຊັ່ນ: ພະຍາດຖອກທ້ອງ, ໄຂ້ເລືອດອອກ, ພະຍາດຕິດຕໍ່ທາງເພດສຳພັນ HIV/AIDS, ແລະ ພະຍາດໄຂ້ຫວັດສັດປີກ. ໂດຍລວມແລ້ວ, ທັງໝົດທີ່ກ່າວມາແມ່ນຈຳເປັນຕ້ອງມີລະບົບການປ້ອງກັນ, ລະບົບການກະກຽມ ແລະ ລະບົບການຕອບໂຕ້.

## ການກະກຽມທາງດ້ານກົດໝາຍແມ່ນຫຍັງ ?

ການກະກຽມທາງດ້ານກົດໝາຍແມ່ນເພື່ອຮັບປະກັນໃຫ້ມີກົດໝາຍ ແລະ ນະໂຍບາຍແຫ່ງຊາດຮອງຮັບ ຄື:

- ອຳນວຍຄວາມສະດວກໃນການລະດົມພົນ ແລະ ຕອບໂຕ້ຢ່າງໄວວາ ເພື່ອຕອບໂຕ້ໃນພາວະສຸກເສີນ ທາງດ້ານໄພພິບັດ ແລະ ພະຍາດຕິດຕໍ່
- ຮັບປະກັນການປະສານງານທີ່ດີ ແລະ ແລກປ່ຽນຂໍ້ມູນຂ່າວສານ ລະຫວ່າງຄູ່ຮ່ວມຕ່າງໆ -- ທ້ອງຖິ່ນ, ແຫ່ງຊາດ ແລະ ສາກົນ
- ສົ່ງເສີມສະໜັບສະໜູນສ້າງບັນດາມາດຕະຖານຄວາມຮັບຜິດຊອບ ແລະ ຄຸນນະ ພາບທີ່ດີ
- ເສື່ອມສານໃຫ້ເຂົ້າກັບບັນດາຂໍ້ຕົກລົງ ແລະ ບັນດາມາດຕະຖານ ທີ່ສຳຄັນຂອງຂົງເຂດພາກພື້ນ ແລະ ສາກົນ

## ເປັນຫຍັງການກະກຽມທາງດ້ານກົດໝາຍຈຶ່ງສຳຄັນ ?

**ບັນຫາທາງກົດໝາຍສ່ວນໃຫ່ຍແມ່ນຖືກເບິ່ງຈາກເບື້ອງເທິ່ງ** ເປັນຄືສ່ວນໜຶ່ງຂອງການວາງແຜນການກະກຽມສຳລັບໄພພິບັດ ແລະ ພະຍາດຕິດຕໍ່. ໂດຍສະເພາະແລ້ວແມ່ນສຳຄັນໃນກໍລະນີສະພາບການເກີດຂື້ນຢູ່ບ່ອນໃດໜຶ່ງ, ຊຶ່ງຈຳເປັນຕ້ອງໄດ້ຮັບການຊ່ວຍເຫລືອ ຈາກພື້ນທີ່ຂອບເຂດຊາຍແດນຕິດຈອດກັນ ຫລື ຈາກສາກົນ.

---

**“ມີກົດໝາຍທີ່ດີ ແລະ ລະບົບທີ່ເຫມາະສົມ ຈະຊ່ວຍໃຫ້ພວກເຮົາຮັບຂໍ້ມູນຂ່າວ ສານທີ່ຖືກຕ້ອງຢູ່ສະຖານທີ່ທີ່ຖືກຕ້ອງ ໃນໄລຍະເວລາທີ່ຖືກຕ້ອງ ພາຍຫລັງໄພພິບັດ”**

*ທ່ານ ນາງ ຟັມ ຈັນທິນາຍ,*

*ເລຂາທິການໃຫ່ຍຂອງກາແດງກຳປູເຈຍ*

---

**ປະສົບການໃນໄລຍະຜ່ານມາໃນຂົງເຂດອາຊີປາຊີຟິກ** ແລະ ບ່ອນອື່ນ ໄດ້ສະແດງໃຫ້ເຫັນເລື້ອຍໆວ່າ ບັນດາລະບົບການທາງດ້ານກົດໝາຍ ບໍ່ໄດ້ຮັບການກະກຽມ ສຳລັບພະວະສຸກເສີນໃນຂະໜາດທີ່ກ້ວາງອອກໄປ ແລະ ບາງຄັ້ງສາມາດສົ່ງຜົນກະທົບທາງລົບ ເຮັດໃຫ້ການຊ່ວຍເຫລືອບັນເທົາທຸກໃນພາວະສຸກເສີນຮີບດ່ວນຊັກຊ້າ ຫລື ເພີ້ມມູນຄ່າສິ້ນເປືອງ ແລະ ສິ່ງທ້າທາຍຕ່າງໆ ຂອງການໃຫ້ຄວາມຊ່ວຍເຫລືອທີ່ມີປະສິດທິຜົນ ຂື້ນຕື່ມອີກ.

**ນອກຈາກນັ້ນ, ຍັງກ່ຽວຂ້ອງກັບການບົ່ມຊ້ອນ** ໂຣກລະ**ບາດກະຈາຍພື້ນທີ່ກ້ວາງ**, ເຊັ່ນວ່າ ໂຣກຕິດຕໍ່ທາງລະບົບຫາຍໃຈ SARS ແລະ ໂຣກລະບາດໄຂ້ຫວັດໃຫ່ຍ, ຊຶ່ງຈຳເປັນຕ້ອງໄດ້ລະມັດລະວັງສູງຂື້ນ ເພື່ອຮັບປະກັນວ່າ ບັນຫາທາງກົດໝາຍໄດ້ຮັບການຄາດໝາຍລ່ວງໜ້າ ແລະ ໄດ້ຮັບການຄຸ້ມຄອງລ່ວງໜ້າກ່ອນສະພາບການລະບາດຈະມາເຖີງ, ເພື່ອສາມາດແຈ້ງການ, ຢັບຢັ້ງ ແລະ ຕອບໂຕ້ໄດ້ທັນທວງທີ.



# ບັນດາໂຄງການທ້າງທາກະກຸງມທາງກົດໜມາຍ ຢູ່ໃນປະເທດກຳປູເຈຍ, ລາວ ແລະ ຫວຽດ ນາມ: ຂະບວນການ ແລະ ວິທີການ

ປະຈຸບັນນີ້ ບັນດາ 3 ໂຄງການຂອງການກະກຽມທາງດ້ານກົດໝາຍກຳລັງດຳເນີນການ ກວດສອບ ກົດໝາຍ ແລະ ນະໂຍບາຍສຳລັບສະຖານະການພາວະສຸກເສີນຕໍ່ພະຍາດທີ່ສາມາດ ຕິດຕໍ່ໄດ້ ຢູ່ທີ່ປະເທດ ກຳປູເຈຍ, ລາວ ແລະ ຫວຽດນາມ. ໂຄງການນີ້ກໍ່ຍັງໃຫ້ຄຳແນະນຳຕໍ່ການ ແກ້ໄຂການອອກກົດໝາຍ. ໂຄງການທ້າງທາກະກຽມທາງ ດ້ານກົດໝາຍ ແມ່ນກໍ່ຕັ້ງຂຶ້ນໂດຍ ກອງທຶນຂອງໂຄງການພັດທະ ນາລຸ່ມ ແມ່ນ້ຳຂອງ ແລະ ຄວບຄຸມພະຍາດຕິດຕໍ່ຂອງ ທະນາຄານພັດທະນາເອເຊຍ (ADB) ໄດ້ຮ່ວມມືດຳເນີນ ການຢ່າງໃກ້ຊິດກັບ ຫຼາຍກະຊວງຂອງ ລັດຖະບານ, ສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນ, ອົງການອະນາໄມໂລກ ແລະ ອີກຫຼາຍໜ່ວຍງານໃຫຍ່ໃນແຕ່ລະປະເທດ.



## ການກຳນົດສະພາບການໃນພາຍໜ້າ

ໂຄງການແມ່ນກຳນົດໄພພິບັດທີ່ມີຂະໜາດກວ້າງຫລາຍທີ່ສຸດ ແລະ ເຫດການພາວະສຸກເສີນ ພະຍາດຕິດຕໍ່ ຢູ່ປະເທດ ກຳປູເຈຍ, ລາວ ແລະ ຫວຽດນາມ ຊຶ່ງອາດເປັນທີ່ຕ້ອງການການຮ່ວມມືຈາກພື້ນທີ່ຂອບເຂດຊາຍແດນ ຫລື ຈາກສາກົນ.

## ສະພາບລວມຂອງກອບວຽກນະໂຍບາຍ ແລະ ກົດໜມາຍແຫ່ງຊາດໃນປະຈຸບັນ

ໂດຍຜ່ານການຄົ້ນຄ້ວາ ແລະ ປຶກສາຫາລືທາງດານກົດຫມາຍ, ໂຄງການເກັບກຳ ແລະ ວິເຄາະບັນດາເຄື່ອງມືທາງດ້ານ ນະໂຍບາຍ ແລະ ກົດຫມາຍ ທີ່ມີຢູ່ໃນປະຈຸບັນ ໃນແຕ່ລະປະເທດ ກ່ຽວກັບຫົວຂໍ້ຫລັກ ທີ່ພົວພັນເຖິງການຄຸ້ມຄອງໄພ ພິບັດ ແລະ ພາວະເຫດການສຸກເສີນພະຍາດຕິດຕໍ່.

## ກວດສອບການຈັດຕັ້ງປະຕິບັດ ຂອງບັນດາບົດເອກະສານແນະນຳ, ຂໍ້ຕົກລົງ ແລະ ມາດຕະຖານຕ່າງໆ ທີ່ສຳຄັນ ໃນຂົງເຂດພາກພື້ນ ແລະ ສາກົນ

ໂຄງການຍັງໄດ້ວິເຄາະຂະໜາດຄວາມກວ້າງຂອງບັນດາເຄື່ອງມືຕ່າງໆທີ່ສຳຄັນ ໃນຂົງເຂດພາກພື້ນ ແລະ ສາກົນ ແລະ ອັນໃດໄດ້ຮັບການຈັດຕັ້ງປະຕິບັດ ໃນປະເທດກຳປູເຈຍ, ລາວ ແລະ ຫວຽດນາມ. ໂດຍສະເພາະແລ້ວ ເຄື່ອງມືດັ່ງກ່າວ ແມ່ນເນັ້ນໃສ່ການຈັດຕັ້ງປະຕິບັດຂອງບົດເອກະສານແນະນຳ ກ່ຽວກັບການອຳນວຍຄວາມສະດວກພາຍໃນປະເທດ ແລະ ກົດລະບຽບຂອງສາກົນໃນການຊ່ວຍເຫລືອຟື້ນຟູຄືນໃນເບື້ອງຕົ້ນ ແລະ ການບັນເທົາທຸກຈາກໄພພິບັດ ຂອງປີ 2007 (IDRL ບົດເອກະສານແນະນຳ), ແລະ ກົດລະບຽບດ້ານສຸຂະພາບສາກົນ ຂອງປີ 2005.

## ການຝຶກຫັດທີ່ດີ, ຊ່ອງວ່າງ ແລະ ຫົນທາງກ້າວໄປສູ່ການກະກຽມທາງດ້ານກົດໝາຍທີ່ເຂັ້ມແຂງ

ມີບົດລາຍງານໜຶ່ງ ທີ່ຂຽນອອກໃນຕອນທ້າຍຂອງແຕ່ລະໂຄງການ ຊຶ່ງກຳນົດການຝຶກຫັດທີ່ດີ ແລະ ຊ່ອງວ່າງຄົງຂ້າງ ແລະ ໃຫ້ການແນະນຳບັນດາມາດຕະການ ທາງດ້ານນະໂຍບາຍ ແລະ ກົດໝາຍສະເພາະ ເພື່ອສົ່ງເສີມສະໜັບສະໜູນການຕອບໂຕ້ໄພພິບັດ ແລະ ພະຍາດຕິດຕໍ່ ຢ່າງມີປະສິດທິພາບຢູ່ພາຍໃນປະເທດ ແລະ ສາກົນ.

## ໂອກາດ ແລະ ບົດຮຽນທອດຖອນໄດ້ຈາກໂຄງການ

ຈັດຕັ້ງໜ່ວຍປະຕິບັດງານໂຄງການໜຶ່ງຂຶ້ນ ຊຶ່ງປະກອບມີບັນດາຕົວແທນຈາກລັດຖະບານ, ອົງການກາແດງແຫ່ງຊາດ ຫລື ຊີກວົງເດືອນແດງ, ອົງການອະນາໄມໂລກ ແລະ ບັນດາຜູ້ມີສ່ວນຮ່ວມອື່ນໆ ເພື່ອອຳນວຍເປີດກອງປະຊຸມອັນໜຶ່ງທີ່ສຳຄັນ ສຳລັບຮ່າງບົດແນະນຳ ແລະ ປຶກສາຫາລືກ່ຽວກັບການຊອກຫາໝາກຜົນຂອງໂຄງການ, ການໃຫ້ຄຳແນະນຳ ແລະ ຕິດຕາມກວດກາກິດຈະກຳຕ່າງໆ.

ບົດລາຍງານຂອງໂຄງການ ຊຶ່ງບັນຈຸລະບຸໝາກຜົນ ແລະ ຂໍ້ແນະນຳຕ່າງໆແມ່ນເປັນຊັບພະຍາກອນທີ່ມີຄ່າອັນໜຶ່ງ ສຳລັບການທົບທວນຄືນ ຫລື ພັດທະນາການອອກກົດໝາຍສຳລັບການຄຸ້ມຄອງໄພພິບັດ ແລະ ການຄວບຄຸມພະຍາດຕິດຕໍ່.

---

"ພວກເຮົາຈຳເປັນຕ້ອງຊອກຫາຫົນທາງ ເພື່ອຮັບປະກັນວ່າ ຊຸມຊົນສາມາດລາຍງານການລະບາດຂອງພະຍາດໄດ້ໄວເທົ່າທີ່ຈະໄວໄດ້. ການຄົ້ນຄ້ວາ ແລະ ການພັດທະນາກົດໝາຍໃໝ່ ຈະຊ່ວຍໃຫ້ພວກເຮົາຄົ້ນພົບບາງທິດທາງແກ້ໄຂທີ່ຍືນຍາວ"

*ດຣ. ຊົກ ທອັດ, ອຳນວຍການພະແນກຄວບຄຸມໄພພິບັດຕິດຕໍ່,*
*ກະຊວງສາທາລະນະສຸກ ກຳປູເຈຍ*

---

ສຳລັບອົງການກາແດງແຫ່ງຊາດ ແລະ ຊີກວົງເດືອນແດງ, ໂຄງການໄດ້ໃຫ້ໂອກາດໜຶ່ງ ໃນການເຮັດວຽກກັບລັດຖະບານ ເພື່ອກຳນົດແຈ້ງບົດບາດການເປັນຜູ້ຊ່ວຍຕໍ່ພະນັກງານລັດຖະບານໃນການຄຸ້ມຄອງໄພພິບັດ ແລະ ສຸຂະພາບ.

ກາແດງແຫ່ງຊາດ ແລະ ຊີວົງເດືອນແດງ ຍັງເປັນແຮງຂັບເຄື່ອນ ໃນການສະໜັບສະໜູນປ່ຽນແປງໃນການອອກລະບຽບກົດໝາຍໄພພິບັດຢູ່ພາຍໃນປະເທດ ເພື່ອປັບປຸງການຫ້າງຫາກະກຽມຕໍ່ໄພພິບັດ ແລະ ພະຍາດຕິດຕໍ່.

ຫວັງວ່າ ບັນດາໂຄງການຫ້າງຫາກະກຽມທາງດ້ານກົດໝາຍຢູ່ກຳປູເຈຍ, ລາວ ແລະ ຫວຽດນາມຈະມີຈຸດເລີ້ມຕົ້ນ ສຳລັບຄວາມພະຍາຍາມຫລາຍຂຶ້ນ ໃນການປັບປຸງການຫ້າງຫາກະກຽມທາງດ້ານກົດໝາຍ ໃນບັນດາຫລາຍໆປະເທດອື່ນໆທົ່ວອາຊີປາຊີຟິກ.

© ສະຫະພັນກາແດງ ແລະ ຊີກອົງເດືອນແດງສາກົນ. ສ່ວນໜຶ່ງຂອງເອກະສານດັ່ງກ່າວນີ້ອາດຍົກຂຶ້ນເປັນການອ້າງອີງ, ສຳເນົາ, ແປເປັນພາສາອື່ນໆ ຫລື ອາດຈະຖືດັດປັບໃຫ້ເມາະສົມກັບຄວາມຈຳເປັນຂອງທ້ອງຖິ່ນ ໂດຍປັດສະຈາກການອະນຸຍາດກ່ອນ ຈາກສະຫະພັນກາແດງ ແລະ ຊີກວົງເດືອນແດງ, ໂດຍມີເງື່ອນໄຂວ່າແຫລ່ງທີ່ມາເດີມຕ້ອງລະບຸຊັດເຈນ.

ໂຄງການນີ້ສະໜັບສະໜູນໂດຍ:
ທະນາຄານພັດທະນາເອເຊຍ
ADB

ສະຫະພັນກາແດງ ແລະ ຊີກວົງເດືອນແດງ
ຫ້ອງການຂົງເຂດອາຊີປາຊີຟິກ
ອາມວອກ, ອາຄານ 905, 218 ຈາລັງ ອັມປັງ
ກົວລາລຳເປີ, ມາເລເຊຍ
ອີເມວ: Victoria.bannon@ifrc.org, aishah.amin@ifrc.org